ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 04 ຫາ 08 ມີນາ 2024



ຄວາມຄືບໜ້າຂອງໂຄງການພັດທະນາພື້ນຖານໂຄງລ່າງຕາມແລວເສດຖະກິດ
ຕາເວັນອອກ-ຕາເວັນຕົກ (ພຄກ)

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ຄວາມຄືບໜ້າຂອງໂຄງການພັດທະນາພື້ນຖານ ໂຄງລ່າງຕາມແລວເສດຖະກິດ ຕາເວັນອອກ-ຕາເວັນຕົກ (ພຄກ)

ລັດຖະບານແຫ່ງ ສປປ ລາວ ໄດ້ຮັບທຶນກູ້ຢືມຈາກທະນາຄານພັດທະນາອາຊີ ADB ປະມານ 60 ລ້ານໂດລາສະຫະລັດ ເພື່ອຈັດຕັ້ງປະຕິບັດໂຄງການພັດທະນາພື້ນຖານໂຄງລ່າງຕາມແລວເສດຖະກິດ ຕາເວັນອອກ-ຕາເວັນຕົກ ພຄກ ໂດຍມີພື້ນທີ່ຈັດຕັ້ງປະຕິບັດ ຢູ່ 02 ແຂວງ 12 ເມືອງ, ໃນນີ້ແຂວງສະຫວັນນະເຂດ 09 ເມືອງຄື: ເມືອງ ໄຊບູລີ, ພະລານໄຊ, ຈຳພອນ, ພີນ, ວິລະບູລີ,ນະຄອນໄກສອນ ພົມວິຫານ, ຊົນນະບູລີ,ໄຊພູທອງ ແລະ ເມືອງ ສອງຄອນ, ແຂວງສາລະວັນມີ 03 ເມືອງຄື ເມືອງ ວາປີ, ເມືອງ ສາລະວັນ ແລະ ເມືອງຄົງເຊໂດນ ທັງສອງແຂວງມີທັງໝົດ 17 ໂຄງການຍ່ອຍ ປັດຈຸບັນການກໍ່ສ້າງແມ່ນສຳເລັດແລ້ວ 99,5 ສ່ວນຮ້ອຍ ຫາກລະບົບຊົນລະປະທານດັ່ງກ່າວກໍ່ສ້າງສຳເລັດຈະສາມາດຫົດພື້ນທີ່ນາ ແລະ ພືດໄດ້ທັງໝົດ 7.890 ເຮັກຕາ ແລະ ມີທາງຊອຍ 82.8 ກິໂລແມັດ ສຳລັບການສັນຈອນ ແລະ ຂົນສົ່ງຜົນຜະລິດກະສິກຳໃຫ້ປະຊາຊົນ. ຈາກບົດລາຍງານປະເມີນໂຄງການໃນທ້າຍປີ 2023 ໃຫ້ຮູ້ວ່າ:ໂຄງການແມ່ນເລີ່ມຈັດຕັ້ງປະຕິບັດໃນປີ 2013 ມີໄລຍະຈັດຕັ້ງປະຕິບັດໂຄງການ 8 ປີ ເຊິ່ງໃນປີ 2024 ນີ້ຈະສິ້ນສຸດໂຄງການ, ຈຸດປະສົງຫຼັກຂອງໂຄງການ ແມ່ນ ມີ 3 ອົງປະກອບຫຼັກຄື: 1. ພື້ນຖານໂຄງລ່າງກະສິກຳໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະ ທັນສະໄໝ , 2 .ຊາວນາມີຄວາມຮູ້ຄວາມສາມາດເພີ່ມຂຶ້ນ ສາມາດຄຸ້ມຄອງ ແລະ ນຳໃຊ້ພື້ນຖານໂຄງລ່າງກະສິກຳຢ່າງມີປະສິດທິພາບ ແລະ 3. ຄຸ້ມຄອງ ໂຄງການໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ຜົນຈາກການກໍ່ສ້າງໂຄງການດັ່ງກ່າວເຫັນໄດ້ວ່າພາຍໃນປີ 2023 ລາຍຮັບຕໍ່ປີສະເລ່ຍຄົວເຮືອນໃນເຂດໂຄງການເພີ່ມຂຶ້ນເຖິງ 24 ລ້ານກີບ ຈາກ 11 ລ້ານກີບໃນປີ 2013, ຮອດເດືອນທັນວາ 2021 ຜະລິດຕະພາບເຂົ້າເພີ່ມຂຶ້ນຈາກ 3,0 ໂຕນ/ຮຕ, ໃນປີ 2013 ມາເປັນ 4,5 ໂຕນ/ຮຕ, ຄວາມຖີ່ໃນການຜະລິດກະສິກຳກໍ່ເພີ່ມຂຶ້ນຈາກ 140 ສ່ວນຮ້ອຍ ໃນປີ 2013 ມາເປັນ 180 ສ່ວນຮ້ອຍ, ຊາວນາປະມານ 72.000 ຄົນ ໄດ້ນຳໃຊ້ພື້ນຖານໂຄງລ່າງກະສິກຳທີ່ຮັບການຟື້ນຟູສຳເລັດ,ຈັດຕັ້ງ ແລະ ຂຶ້ນທະບຽນກຸ່ມຜູ້ໃຊ້ນ້ຳຈຳນວນ 17 ກຸ່ມ ຝຶກອົບຮົມ ແລະ ໃຫ້ຄວາມຮູ້ການປະຕິບັດຕົວຈິງໃຫ້ກຸ່ມຜູ້ໃຊ້ນ້ຳ 30 ຄັ້ງ ໃນ ປີ 2019



ທຸກໆໂຄງການຍ່ອຍ ໄດ້ສຳເລັດການສ້າງແຜນຄຸ້ມຄອງນຳໃຊ້ໂຄງລ່າງພື້ນຖານກະສິກຳ ແລະ ໄດ້ຖືກນຳໃຊ້ໃນປັດຈຸບັນ, ໃນປີ 2021 ສາມາດເກັບເງິນຄ່າທຳນຽມຄຸ້ມຄອງ-ນຳໃຊ້ໂຄງລ່າງພື້ນຖານໄດ້ຢ່າງເຕັມເມັດເຕັມໜ່ວຍ, ການຈັດຕັ້ງປະຕິບັດໂຄງການເຫັນໄດ້ວ່າບາງພື້ນທີ່ສ່ວນໜ້ອຍທີ່ຍັງບໍ່ສຳເລັດຮ້ອຍສ່ວນຮ້ອຍປະຊາຊົນຜູ້ໃຊ້ນ້ຳແມ່ນມີຄວາມຫ້າວຫັນຢາກນຳໃຊ້ນ້ຳທຳການຜະລິດ ຈາກການສຳພາດ ທ່ານ ຄຳຫຼ້າ ສີມມະໄລ ຫົວໜ້າກຸ່ມຜູ້ໃຊ້ນຳຊົນລະປະທານ ແກ້ງຫວດ ເມືອງຄົງເຊໂດນ, ແຂວງສາລະວັນ ໄດ້ໃຫ້ຮູ້ວ່າປະຊາຊົນໃນເຂດພື້ນທີ່ຕົນແມ່ນຊົນລະປະທານຈາກໂຄງການແກ້ງຫວດມີຄວາມດີໃຈທີ່ສາມາດທຳການຜະລິດທົດແທນໃນລະດູແລ້ງເຊິ່ງປີ 2023 ນີ້ ເປັນປີທຳອິດ ເນື່ອງຈາກລະດູຝົນໃນເຂດດັ່ງກ່າວແມ່ນມີສະພາບນ້ຳຖ້ວມຜົນຜະລິດເສຍຫາຍຫຼາຍພໍສົມຄວນ ມາເຖິງປັດຈຸບັນຊາວນາແມ່ນມີຄວາມດີໃຈຫຼາຍ ມີນ້ຳເຮັດການຜະລິດເຂົ້າ ແລະ ພືດ ແລະ ມີເສັ້ນທາງທີ່ສະດວກສະບາຍກວ່າແຕ່ກ່ອນ, ທ່ານ ຖາວອນ ແກ້ວປັນຍາ ຫົວໜ້າກຸ່ມຜູ້ໃຊ້ນ້ຳໂຄງການຍ່ອຍນາທົ່ມ, ເມືອງ ຄົງເຊໂດນ ແຂວງສາລະວັນ ໄດ້ກ່າວວ່າຜ່ານການນຳໃຊ້ຊົນລະປະທານ ເຫັນວ່າຄ່າກະແສໄຟ ແລະ ຄ່າທຳນຽມການຄຸ້ມຄອງ ແມ່ນບໍ່ແພງ ປະຊາຊົນເຮັດການຜະລິດແມ່ນສາມາດກຸ້ມກິນ ເຫຼືອຂາຍຈຳນວນໜຶ່ງ ແລະ ປັດຈຸບັນກອງທຶນສຳລັບແຮໄວ້ເປັນຄ່າບຳລຸງສ້ອມແປງພາຍໃນກຸ່ມແມ່ນມີຍອດ 40 ລ້ານກີບ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;